ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໘໗໕/ປພຖຂ/໑໑໘໐໐໙**

# ຖແລງການ

## ເປີດໂປ່ງພັກຣັດ ສປປລາວ. ຕ້ານສິດທິມະນຸດ.

ການຈັບກຸມປະຊາຊົນກ່ອນງານ ຊີເກມ 1,123 ຄົນ ຕາມທີ່ເປັນຂ່າວນັ້ນ (Media Newswire.com/release 1096784.html). ມັນເປັນການທ້າທາຍ ຕໍ່ກົດບັດສະຫະປະຊາຊາດ, ທ້າທາຍ ຕໍ່ຂໍ້ຕົກລົງ ວ່າດ້ວຍສິດທິເສຣີພາບ ຂອງພົລເມືອງ ແລະສິດທິ ທາງການເມືອງ ຢູ່ກອງປະຊຸມ ສະມາຄົມ ອາຊ່ຽນ ຄັ້ງທີ 15 ທີ່ຫົວຫີນປະເທດໄທຍ ຢ່າງຮ້າຍແຮງທີ່ສຸດ, ແລະມັນກໍເປັນຄວາມຈິງ ຕາມລາຍງານ ຫ້ອງການ ປະຊາທິປະໄຕ, ສິດທິມະນຸດແລະແຮງງານ ທີ່ວ່າ "ການລະເມີດ ສິດທິມະນຸດໃນລາວ ຍັງມີ ຢ່າງຕໍ່ເນື່ອງ ຣະດັບແຂວງ, ເມືອງ, ແລະທ້ອງຖິ່ນ". -ປະຊາຊົນ ຍັງຖືກປະຕິເສດ ໃນການປ່ຽນຣັຖບານ ຂອງຕົນ.

ດັ່ງນັ້ນ, ອົງການຈັດຕັ້ງສາກົນແລະປະເທດຍຸທທະສາດ ໃນການແກ້ໄຂບັນຫາລາວ ຈິ່ງໄດ້ບີບຣັດ ໃຫ້ພັກຣັດ ຢຸດຕິ ການລະເມີດສິດທິມະນຸດ....ແຕ່ກໍຍັງຊຸກຍູ້ໃຫ້ລາວ ໄດ້ເປັນເຈົ້າພາບ ຈັດກອງປະຊຸມ ສຳຄັນໆ...ຫລາຍຢ່າງ, ເປັນຕົ້ນ: ກອງປະຊຸມຣັຖສະພາ ຄັ້ງທີ 17 ຂອງ ບັນດາປະເທດອາຊ່ຽນປາຊີຟິກ. ກອງປະຊຸມຣັຖມົນຕຣີຖແລງຂ່າວ ຄັ້ງທີ 10 ຂອງປະເທດສະມະຊິກ ສະມາຄົມອາຊຽນ ແລະອື່ນໆ... ນອກຈາກນັ້ນ, ກໍຍັງຊຸກຍູ້ໃຫ້ລາວໄດ້ເປັນເຈົ້າພາບຈັດງານ ຊີເກມ ຄັ້ງທີ 25 ອີກດ້ວຍ; ເພື່ອສ້າງເງື່ອນໄຂ

ໃຫ້ພັກຣັດ ສປປລາວ. ໄດ້ສ້າງພາບພົດອັນດີ ໃນດ້ານການເຄົາຣົບຕໍ່ສິດທິເສຣີພາບ ຂອງປະຊາຊົນ ແລະຄວາມໂປ່ງໃສ ຂອງຕົນ ອອກສູ່ເວທີສາກົນ.

ແຕ່ພັກຣັດຍັງສືບຕໍ່ຈັບກຸມຄຸມຂັງປະຊາຊົນ ໃນຊາດຂອງຕົນເອງຢູ່ຢ່າງຕໍ່ເນື່ອງ. ຕາມຄວາມເປັນຈິງແລ້ວ, ພັກຣັດຈັບປະຊາຊົນ ທີ່ບໍ່ເພິ່ງປາຖນາ, ມີຫລາຍກວ່າ 1,123 ຄົນ ຕາມທີ່ເປັນຂ່າວນັ້ນອີກ. ປະຊາຊົນ ທີ່ຖືກຈັບ ມີ 3 ປະເພດ ຄື: 1.ພວກທີ່ສົງສັຍວ່າ ເປັນຜູ້ຮັບໃຊ້ອິດທິກຳລັງປໍຣະປັກ ຕ້ານພັກຕ້ານຣັດ. 2.ພວກນັກເລງອັນຕະພານ, ສູບຝິ່ນ ກິນກັນຊາ, ເຮໂຣອີນຕ່າງໆ ທີ່ພັກຣັດບໍ່ສາມາດຈະຄວບຄຸມໄດ້ ໃນເວລາ ຊີເກມ ແລະ 3. ພວກທີ່ກັບມາຈາກການເຮັດງານຢູ່ປະເທດໄທຍ. ພັກຣັດຖືວ່າພວກເຫລົ່ານີ້ ຖືກເຊກເຊງ ຈາກອິດທິກຳລັງປໍຣະປັກ ໃຫ້ເປັນຄົນຕ້ານພັກຕ້ານຣັດ.

ການຈັບກຸມຄັ້ງນີ້, ແມ່ນຄນະຜູ້ຊ່ຽວຊານ ຈາກວຽດນາມໂດຍຕຣົງ ມາຮັບຜິດຊອບເລື້ອງນີ້ສະເພາະ. ມັນເປັນປະເພນີ ຂອງພັກຣັດຜເດັດການ...ກ່ອນຈະເປີດງານໃຫຍ່ສຳຄັນ, ພັກຣັດຕ້ອງກວາດລ້າງສ້ຽນໜາມ ປະເພດ "ປາຄໍໄກ່ ໃສ່ໜ້າລີງ, ນາບປ່າ ໃຫ້ເສືອກິວ" ເພາະຢ້ານປະຊາຊົນລຸກຮື້, ປະທ້ວງຂາຍໜ້າພັກຣັດໃນງານຊີເກມ ທີ່ລາວເປັນເຈົ້າພາບນີ້. -ພັກຣັດ ໄດ້ເລີ້ມຈັບ ແບບຫາຍຕົວເລີຍ ມາເປັນປີແລ້ວ! ສຳລັບບຸກຄົນຢູ່ພາຍໃນປະເທດ ທີ່ລ້ຳລວຍຜິດປົກກະຕິ, ຄ້າເງິນ ແລະພົວພັນກັບຕ່າງປະເທດ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ມີຄວາມເປັນຫ່ວງເປັນໄຍນຳ ອ້າຍເອື້ອຍ ນ້ອງ ທຸກໆຄົນ ທີ່ຖືກຈັບໃນເທື່ອນີ້ ແລະພວກເຮົາ ກໍຈະຜັກດັນ, ບີບຣັດສຸດຂີດ... ເພື່ອໃຫ້ພວກທ່ານ ໄດ້ຮັບອິສຣະພາບໃນໄວໆນີ້. **-ພວກເຮົາ ຍຶດໝັ້ນຢ່າງເດັດດ່ຽວໝຽວແໜ້ນ ໃນການຕໍ່ສູ້ເພື່ອສ້າງ ຄວາມສາປະຄີປອງດອງຊາດ ຕາມແນວທາງສັນຕິວິທີ... ແຕ່ພວກເຮົາ ບໍ່ມີນະໂຍບາຍເດີນຂບວນ ປະທ້ວງຢູ່ພາຍໃນປະເທດ, ເພາະບໍ່ມີຄວາມປອດພັຍ...ຍ້ອນພັກຣັດ ແມ່ນຜເດັດການ ພັກດຽວຄອງອຳນາດ.**

**ພວກເຮົາຮຽກຮ້ອງ ມາຍັງເພື່ອນຮ່ວມຊາດ ຄົນລາວທຸກທີ່ວໜ້າ... ຢ່າໄດ້ຫລົງກົນລວງ ຂອງພັກຣັດເປັນເດັດຂາດ... ເພາະການເດີນຂບວນ ປະທ້ວງຢູ່ພາຍໃນປະເທດນັ້ນ ລ້ວນແລ້ວແຕ່ແມ່ນ ການກະທຳຂອງພັກຣັດ ເຮັດຂື້ນມາ ເພື່ອຊອກຮູ້ ຜູ້ທີ່ຕ້ານພັກຕ້ານຣັດ...ຈາກນັ້ນ, ກໍຈັບກຸມ ແລະດັບສູນ. ແຕ່ພວກເຮົາ ກໍເຄົາຣົບ ຕໍ່ສິດທິເສຣີພາບຂອງທຸກຄົນເໝືອນກັນ, ຜູ້ໃດຢາກເດີນປະທ້ວງ ກໍເປັນສິດທິຂອງພວກເຂົາ.**

ການແກ້ໄຂບັນຫາລາວ ຕາມແນວທາງສັນຕິວິທີ ເພື່ອກ້າວໄປສູ່ ຄວາມສຳເຣັດນັ້ນ, ມັນມີຫລາຍຮູບແບບ, ມີຫລາຍຣະດັບ ແລະມີຫລາຍຂັ້ນຕອນ. ພວກເຮົາ ຕ້ອງມີຄວາມເຊື່ອໝັ້ນ, ເສັຽສລະ, ກ້າຫານ, ອົດທົນຕໍ່ສູ້ ພາຍໃຕ້ການນຳພາຂອງພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ຈິ່ງຈະ ກ້າວໄປສູ່ໄຊຊນະໄດ້.

ພວກເຮົາ ຮຽກຮ້ອງມາຍັງ ອ້າຍ ເອື້ອຍ ນ້ອງ ໃນຖັນແຖວ ແລະກອງກຳລັງ ປະກອບອາວຸດ, ຈົ່ງໄດ້ຮັກສາ ສຸຂພາບ ແລະຖນອມນ້ຳໃຈ ຮັກຊາດໄວ້ໃຫ້ໝັ້ນຄົງ.... ຢ່າໄດ້ຫລົງກົນລວງ ຂອງຊາດ ຕ່າງດ້າວ, ຢ່າໄດ້ຫລົງເຊື່ອ ກົນອຸບາຍ ຂອງພັກຮັດ ແລະຢ່າໄດ້ເຄື່ອນໄຫວເໜັງຕີງໃດໆທັງສິ້ນ... ເພາະຈະຕົກ ເຂົ້າໃນແຜນກວາດລ້າງ ຂອງພວກເຂົາ.

ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວເອງ ຈະຕິດຕໍ່ມາເຖິງອ້າຍເອື້ອຍ ນ້ອງ ໃນຖັນແຖວກອງກຳລັງຮັກຊາດ ເມື່ອເຖິງເວລາ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.
ຂໍຂອບໃຈ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໒໐ ພຶສຈິກາ ໒໐໐໙.**